ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທ່ານ ນ. ຂັນແກ້ວ ຫຼ້າມະນີເງີາ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ຊຸນ ຢຸ້ຍ (SUN YU) ຜູ້ອໍານວຍການໃຫຍ່ ທະນາຄານແຫ່ງ ປະເທດຈີນ (ຮົງກົງ) ຈໍາກັດ ໃນວັນທີ 20 ພະຈິກ 2023.



ໃນຕອນເຊົ້າຂອງວັນທີ 20 ພະຈິກ 2023, ທີ່ຫ້ອງຮັບແຂກຂອງ ທະນາຄານແຫ່ງ ສປປ ລາວ (ທຫລ), ທ່ານ ນ. ຂັນແກ້ວ ຫຼ້າມະນີເງີາ, ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະກົມພາຍໃນ ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ຊຸນ ຢຸ້ຍ (SUN YU) ຜູ້ອໍານວຍການໃຫຍ່ ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈໍາກັດ (BOC) ພ້ອມດ້ວຍຄະນະ. ຈຸດປະສົງໃນການຢ້ຽມຂໍ່ານັບໃນຄັ້ງນີ້ແມ່ນເພື່ອ ສະແດງຄວາມຂອບໃຈ ແລະ ຮູ້



ບຸນຄຸນຕໍ່ ທຫລ ທີ່ໃຫ້ການຊຸກຍູ້ຕິດຕາມ ແລະ ສະໜັບສະໜູນການເຄື່ອນໄຫວດຳເນີນທຸລະກິດຂອງທະນາຄານໃຫ້ດຳເນີນໄປດ້ວຍດີ. ພ້ອມກັນນີ້, ກໍໄດ້ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນໃນໄລຍະຜ່ານມາ ແລະ ຂໍຄຳເຫັນຊີ້ນຳ ເພື່ອເປັນທິດທາງໃນການຈັດຕັ້ງປະຕິບັດແຜນການດຳເນີນທຸລະກິດໃນຕໍ່ໜ້າຂອງ BOC  ສາຂານະຄອນຫຼວງວຽງຈັນ.

ໃນໂອກາດນີ້, ທ່ານ ຮອງຜູ່ວ່າການ ທຫລ ໄດ້ກ່າວຕ້ອນຮັບທ່ານ ຊຸນ ຢຸ້ຍ ຜູ້ອຳນວຍການໃຫຍ່ BOC ຈຳກັດ ເນື່ອງໃນໂອກາດທີ່ມາເຄື່ອນໄຫວ ແລະ ເຮັດວຽກຢູ່ ສປປ ລາວ ແລະ ໄດ້ຊົມເຊີຍຕໍ່ກັບການປະກອບສ່ວນຢ່າງຕັ້ງໜ້າໃນການພັດທະນາເສດຖະກິດ ສປປ ລາວ ຂອງ BOC ສາຂານະຄອນຫຼວງວຽງຈັນ ພ້ອມທັງໄດ້ເນັ້ນໜັກໃຫ້ BOC ສາຂານະຄອນຫຼວງວຽງຈັນ ສືບຕໍ່ອຳນວຍຄວາມສະດວກໃຫ້ແກ່ການຊຳລະສະສາງ ແລະ ການສະໜອງທຶນໃຫ້ແກ່ບັນດາວິສາຫະກິດຈີນ ທີ່ລົງທຶນຢູ່ ສປປ ລາວ ລວມທັງຮ່ວມທຶນ ເປັນຕົ້ນແມ່ນການບໍລິການຊື້ປີ້ລົດໄຟລາວ-ຈີນ, ການສະໜອງສະພາບຄ່ອງລະຫວ່າງທະນາຄານ, ການສ້າງຜະລິດຕະພັນໃໝ່ທີ່ເຫັນວ່າເໝາະສົມກັບສັງຄົມ ເຊັ່ນ: ເງິນກູ້ປ່ອຍຮ່ວມ (Syndicated Loans), ຊຸກຍູ້ນະໂຍບາຍຂອງ ສປປ ລາວ ໃນການສົ່ງເສີມການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ, ຊ່ວຍ ທຫລ ໃນການຕິດຕາມ ແລະ ຄຸ້ມຄອງເງິນຕາຕ່າງປະເທດໃຫ້ສອດຄ່ອງກັບນິຕິກຳທີ່ ທຫລ ກໍ່ຄື ສປປ ລາວ ວາງອອກ, ປະສານສົບທົບກັບບັນດາທະນາຄານ ຢູ່ ສປປ ລາວ ໃນການເຂົ້າຮ່ວມການສະໜອງສິນເຊື່ອໃຫ້ແກ່ ໂຄງການໃຫຍ່ ແລະ ມີຄວາມສຳຄັນໃນຕໍ່ໜ້າ ເພື່ອປະກອບສ່ວນໃນການສ້າງສາພັດທະນາເສດຖະກິດສັງຄົມຂອງ ສປປ ລາວ.



ຂ່າວ ແລະ ພາບ :  ເປາະ ລາວບາງເຮີ ແລະ ແຂກ ມູນລະໄມ

*ຢູ່ເມືອງລາວໃຊ້ແຕ່ເງິນກີບ*